ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບວັດ ທະນະຖາວອນ

ກະຊວງການເງິນ

ເລກທີ 0204 /ກງ
ນະຄອນຫຼວງວຽງຈັນ, ວັນທີ 15. ມັງກອນ 2019

# ຂໍ້ຕົກລົງ
## ວ່າດ້ວຍການອະນຸມັດນຳໃຊ້ລະບົບແຈ້ງພາສີປະຕູດຽວ

- ອີງຕາມ ດຳລັດນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017.
- ອີງຕາມ ຂໍ້ຕົກລົງຂອງກະຊວງການເງິນວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວອົງການແຈ້ງພາສີປະຕູດຽວ ສະບັບເລກທີ 2019/ກງ, ລົງວັນທີ 26 ມິຖຸນາ 2015.
- ອີງຕາມ ສັນຍາສຳປະທານສ້າງຕັ້ງລະບົບແຈ້ງພາສີປະຕູດຽວລະຫວ່າງກະຊວງການເງິນ ແລະ ບໍລິສັດບີວໂຮເວີຣິຕັດສ໌ສະບັບລົງວັນທີ 28 ມັງກອນ 2013.
- ອີງຕາມ ບົດລາຍງານຂອງກົມພາສີ ສະບັບເລກທີ 07522/ກພສ, ລົງວັນທີ 04 ທັນວາ 2018, ສະບັບເລກທີ 08020/ກພສ, ວັນທີ 14 ທັນວາ 2018 ແລະ ສະບັບເລກທີ 00070/ກພສ, ວັນທີ 07 ມັງກອນ 2019.

ລັດຖະມົນຕີກະຊວງການເງິນ ຕົກລົງ:

**ມາດຕາ 1.** ໃຫ້ຈັດຕັ້ງປະຕິບັດລະບົບແຈ້ງພາສີປະຕູດຽວ (Lao National Single Window ຫຼື LNSW) ເຂົ້າໃນການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກສິນຄ້າປະເພດຕ່າງໆ; ໂດຍໃຫ້ນຳໃຊ້ລະບົບດັ່ງກ່າວເຂົ້າໃນການຄຸ້ມຄອງການນຳເຂົ້າສິນຄ້າປະເພດພາຫະນະ ຢູ່ດ່ານພາສີສາກົນຂົວມິດຕະພາບ 1 ເປັນບາດກ້າວເລີ່ມຕົ້ນ. ພາຍຫຼັງມີການປັບປຸງ, ພັດທະນາ ແລະ ມີຜົນສຳເລັດໃນການຈັດຕັ້ງປະຕິບັດ ຈຶ່ງໃຫ້ສືບຕໍ່ຜັນຂະຫຍາຍການນຳໃຊ້ລະບົບໄປສູ່ບັນດາດ່ານພາສີສາກົນໃນຂອບເຂດທົ່ວປະເທດ.

**ມາດຕາ 2.** ໃຫ້ບັນດາຂະແໜງການລັດທີ່ກ່ຽວຂ້ອງ ອອກຄຳແນະນຳກ່ຽວກັບຂັ້ນຕອນການອອກໃບອະນຸຍາດ, ການອອກໃບຢັ້ງຢືນ ແລະ ການແຈ້ງພາສີທີ່ຕິດພັນກັບຄວາມຮັບຜິດຊອບຂອງຕົນເອງໃຫ້ກະທັດຮັດ ງ່າຍດາຍ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ.

**ມາດຕາ 3.** ໃຫ້ຊຳລະຄ່າພາສີ, ຄ່າອາກອນ, ຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ທີ່ຕ້ອງມອບເຂົ້າງົບປະມານ ລັດສຳລັບການນຳເຂົ້າ ແລະ ການສົ່ງອອກສິນຄ້າ, ເຄື່ອງຂອງ ແມ່ນໃຫ້ຊຳລະລວມສູນຈຸດດຽວຢູ່ດ່ານພາສີຊາຍແດນບ່ອນນຳເຂົ້າ ແລະ ສົ່ງອອກສິນຄ້າ ໂດຍຜ່ານລະບົບແຈ້ງພາສີປະຕູດຽວ (LNSW) ທີ່ເຊື່ອມໂຍງກັບລະບົບ ແຈ້ງພາສີດ້ວຍເອເລັກໂຕຣນິກ (ASYCUDA) ແລະ ລະບົບຊຳລະເງິນຜ່ານທະນາຄານ (SmartTax).

**ມາດຕາ 4.** ໃຫ້ບໍລິສັດຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວ ຈັດເກັບຄ່າບໍລິການນຳໃຊ້ລະບົບດັ່ງກ່າວ ໃນອັດຕາ 120.000 (ໜຶ່ງແສນຊາວພັນ) ກີບ ຕໍ່ການແຈ້ງນຳເຂົ້າ-ສົ່ງອອກສິນຄ້າ 1 ຄັ້ງ ຕາມທີ່ກຳນົດໃນສັນຍາສຳປະທານໂຄງການດັ່ງກ່າວ ຊຶ່ງບໍ່ລວມເອົາຄ່າພາສີ, ຄ່າອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຂອງຂະແໜງການລັດກ່ຽວຂ້ອງ.

**ມາດຕາ 5.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ພິມລົງໃນຈົດໝາຍເຫດທາງລັດຖະການ 15 ວັນ.

ລັດຖະມົນຕີກະຊວງການເງິນ

ສົມດີ ດວງດີ